ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----=== 000 ===----

ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ

ສຳນັກງານ ຄລຕ                                        ເລກທີ: 507/ສຄລຕ

ນະຄອນຫຼວງວຽງຈັນ, ວັນທີ 23 DEC 2011

# ແຈ້ງການ

# ກ່ຽວກັບການສືບທອດມູນມໍຣະດົກຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບລາວ

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກກຊັບ ເລກທີ 006/ຄລຕ, ລົງວັນທີ 08 ກໍລະກົດ 2010.

## ສຳນັກງານ ຄລຕ ອອກແຈ້ງການ:

1. ອະນຸຍາດໃຫ້ໂອນຮຸ້ນໃນກໍລະນີຜູ້ຖືຮຸ້ນເດີມປະເພດບຸກຄົນໄດ້ເສຍຊີວິດ.
2. ການໂອນຮຸ້ນດັ່ງກ່າວ ຕ້ອງໄດ້ປະກອບສຳນວນຄຳຮ້ອງສະເໜີຂໍໂອນຮຸ້ນ ດັ່ງນີ້:
   1) ໃບຢັ້ງຢືນການເສຍຊີວິດ;
   2) ໃບຢັ້ງຢືນການສືບທອດມູນມໍຣະດົກຕາມກົດໝາຍ ຫຼື ຕາມພິໄນກຳ (ຢັ້ງຢືນຈາກສຳນັກງານ ທະບຽນສານ);
   3) ໃບຢັ້ງຢືນທີ່ຢູ່ຂອງຜູ້ຮັບໂອນ;
   4) ສຳເນົາບັດປະຈຳຕົວຂອງຜູ້ຮັບໂອນ (ສຳລັບຄົນລາວ);
   5) ສຳເນົາໜັງສືຜ່ານແດນຂອງຜູ້ຮັບໂອນ (ສຳລັບຄົນຕ່າງປະເທດ);
   6) ເອກະສານ ຫຼື ຫຼັກຖານຢັ້ງຢືນຄວາມເປັນສາຍຍາດອື່ນໆ ເຊັ່ນ: ສຳເນົາສຳມະໂນຄົວ.

   **<u>ໝາຍເຫດ</u>**: ກໍລະນີ ຜູ້ເສຍຊີວິດທີ່ເປັນນັກລົງທຶນຕ່າງປະເທດ ໃຫ້ປະຕິບັດຕາມກົດໝາຍການສືບທອດມູນມໍຣະດົກ ຂອງປະເທດທີ່ກ່ຽວຂ້ອງ.

3. ສຳນວນຄຳຮ້ອງທີ່ໄດ້ລະບຸໄວ້ໃນຂໍ້ 1 ຂ້າງເທິງຕ້ອງຍື່ນຕໍ່ບໍລິສັດຫຼັກຊັບ ທີ່ຜູ້ເສຍຊີວິດໃຊ້ບໍລິການ. ພາຍຫຼັງບໍລິສັດຫຼັກຊັບ ໄດ້ຮັບສຳນວນຄຳຮ້ອງສະເໜີຂໍໂອນຮຸ້ນດັ່ງກ່າວແລ້ວ ບໍລິສັດຫຼັກຊັບ ຕ້ອງກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເອກະສານ. ເມື່ອເຫັນວ່າສຳນວນເອກະສານຖືກຕ້ອງ ແລະ ຄົບຖ້ວນ ບໍລິສັດຫຼັກຊັບ ຕ້ອງປະສານສົມທົບກັບຕະຫຼາດຫຼັກຊັບລາວ ເພື່ອດຳເນີນການໂອນ.
4. ຕະຫຼາດຫຼັກຊັບລາວ ມີໜ້າທີ່ໃຫ້ຄວາມຮ່ວມມື ແລະ ປະຕິບັດໜ້າທີ່ຂອງຕົນໃນການໂອນຮຸ້ນ.

5. ຜູ້ຮັບໂອນຮຸ້ນ ຕ້ອງຮັບຜິດຊອບໃນການຊໍາລະທຸກຄ່າທໍານຽມ ທີ່ຕິດພັນກັບການໂອນດັ່ງກ່າວ.
6. ພາຍຫຼັງສໍາເລັດຂັ້ນຕອນການໂອນຮຸ້ນແລ້ວ ບໍລິສັດຫຼັກຊັບ ຕ້ອງລາຍງານໃຫ້ສໍານັກງານ ຄລຕ ຊາບພາຍໃນ 5 ວັນລັດຖະການ ນັບແຕ່ວັນທີສໍາເລັດການໂອນຮຸ້ນເປັນຕົ້ນໄປ.
7. ສໍາລັບການຂໍໂອນຮຸ້ນກໍລະນີຜູ້ຖືຮຸ້ນເດີມຍັງມີຊີວິດນັ້ນ ແມ່ນບໍ່ອະນຸຍາດໃຫ້ໂອນເທື່ອໃນໄລຍະນີ້.

ສະນັ້ນ, ຈິ່ງໄດ້ແຈ້ງມາຍັງບຸກຄົນ, ນິຕິບຸກຄົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຊາບ ແລະ ຈັດປະຕິບັດຢ່າງເຂັ້ມງວດ. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ຫົວໜ້າສໍານັກງານ ຄລຕ**

ສໍານັກງານ ຄລຕ

ວັດທະນາ ດາລາລອຍ